**ອາທິດທີ 1 ແຫ່ງພຣະກຣິສຕະສົມພົບ**

**ສະຫລອງຄອບຄົວສັກສິດ**

**ວັນອາທິດທີ 30 ທັນວາ 2018**



**ພຣະວໍລະສານໂດຍນັກບຸນລູກາ 2, 41-52**

ທຸກໆປີບິດາມານດາຂອງພຣະເຢຊູເຈົ້າເຄີຍໄປນະຄອນເຢລູຊາແລມເພື່ອສະຫລອງບຸນປາສກາ. ເມື່ອພຣະອົງມີອາຍຸສິບສອງປີແລ້ວ, ພຣະອົງໄດ້ສະເດັດໄປນະຄອນເຢລູຊາແລມພ້ອມກັບບິດາມານດາເພື່ອສະຫລອງບຸນຕາມທຳນຽມ. ເມື່ອສິ້ນວັນສະຫລອງແລ້ວ, ກໍພາກັນຫລົບເມືອ. ສ່ວນພຣະເຢຊູເຈົ້າຍັງຢູ່ນະຄອນເຢລູຊາແລມໂດຍພໍ່ແມ່ບໍ່ຮູ້ເມື່ອ. ທ່ານທັງສອງຄິດວ່າພຣະອົງຄົງໄປນຳໝູ່. ເດີນທາງມາໄດ້ມື້ໜຶ່ງແລ້ວ ຈຶ່ງຊອກຫາພຣະອົງໃນໝູ່ຍາດພີ່ນ້ອງແລະຜູ້ຮູ້ຈັກ. ແຕ່ບໍ່ພົບເຫັນພຣະອົງ. ທ່ານທັງສອງຈຶ່ງຫລົບຄືນໄປຊອກຫາພຣະອົງຢູ່ນະຄອນເຢລູຊາແລມ.

ຊອກຫາຢູ່ສາມມື້ຈຶ່ງພົບພໍ້ພຣະອົງຢູ່ໃນພຣະວິຫານປະທັບຢູ່ກາງພວກນັກປາດ, ຊົງຟັງພວກເຂົາແລະໄຕ່ຖາມພວກເຂົາ. ທຸກຄົນທີ່ໄດ້ຍິນວາຈາຂອງພຣະອົງກໍພິດສະຫວົງໃນສະຕິປັນຍາແລະໃນຄຳຕອບຂອງພຣະອົງ. ທ່ານທັງສອງເຫັນດັ່ງນັ້ນກໍມີຄວາມປະຫລາດໃຈ. ພຣະນາງມາຣີອາຈຶ່ງເວົ້າກັບພຣະອົງວ່າ: ລູກເອີຍ! ເປັນຫຍັງລູກຈຶ່ງທຳຕໍ່ພໍ່ແມ່ດັ່ງນີ້? ເບິ່ງພໍ່ກັບແມ່ພາກັນຊອກຫາລູກດ້ວຍຄວາມອຸກທຸກໃຈ. ພຣະອົງຕອບວ່າ: ພໍ່ແມ່ຊອກຫາລູກເຮັດຫຍັງ? ພໍ່ແມ່ບໍ່ຮູ້ຈັກບໍວ່າ ລູກຕ້ອງທຳວຽກການຂອງພຣະບິດາຂອງລູກ? ທັງສອງທ່ານບໍ່ເຂົ້າໃຈຄຳຕອບນີ້ເລີຍ.

ແລ້ວພຣະອົງກໍສະເດັດຕາມທ່ານທັງສອງເມືອນາຊາແລັດ ແລະໄດ້ນົບນອບຟັງຄວາມທ່ານທັງສອງດ້ວຍ. ສ່ວນພຣະມານດາກໍຮັກສາເລື່ອງທັງໝົດນີ້ໄວ້ໃນໃຈ. ພຣະເຢຊູເຈົ້າກໍຈະເລີນໃຫຍ່ຂຶ້ນທາງຄວາມຮອບຄອບ, ທາງອາຍຸແລະທາງພຣະຄຸນຕໍ່ພຣະພັກພຣະເປັນເຈົ້າແລະຕໍ່ໜ້າມະນຸດດ້ວຍ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ລກ 2, 41-52**

ຫລັງຈາກວັນສະຫລອງການບັງເກີດມາຂອງອົງພຣະບຸດເຈົ້າ, ພຣະມະຫາໄຖ່ຂອງພວກເຮົາ. ພຣະກຣິສຕະຈັກກໍສະຫລອງຄອບຄົວສັກສິດຂອງພຣະເຢຊູເຈົ້າ. ແນ່ນອນ, ໜຶ່ງໃນເຫດຜົນທີ່ພຣະກຣິສຕະຈັກສະຫລອງຄອບຄົວສັກສິດໃນວັນອາທິດນີ້ ແມ່ນເພື່ອຍົກໃຫ້ພວກເຮົາເຫັນເຖິງສະພາບຊີວິດການເປັນມະນຸດຢ່າງແທ້ຈິງຂອງພຣະເຢຊູເຈົ້າ. ເພາະພຣະອົງມີບິດາມານດາເໝືອນກັບພວກເຮົາ. ແຕ່ມີສິ່ງໜຶ່ງທີ່ທຳໃຫ້ຄອບຄົວຂອງພຣະເຢຊູເຈົ້າຕ່າງຈາກຄອບຄົວທົ່ວໄປນັ້ນຄືຄວາມສັກສິດ. ເຮັດຢ່າງໃດພວກເຮົາຈຶ່ງສາມາດເອົາແບບຢ່າງຄວາມສັກສິດຈາກຄອບຄົວຂອງພຣະເຢຊູເຈົ້າໄດ້? ແລະສິ່ງທີ່ທຳໃຫ້ຄອບຄົວຂອງພວກເຮົາເປັນຄອບຄົວສັກສິດໄດ້ນັ້ນແມ່ນຫຍັງ?

ກ່ອນອື່ນໝົດໃຫ້ພວກເຮົາເພັ່ງຊົມຊີວິດຂອງນັກບຸນຢໍແຊແລະແມ່ພຣະມາຣີອາຜູ້ເປັນບິດາມານດາຂອງພຣະເຢຊູເຈົ້າ. ກ່ອນການແຈ້ງຂ່າວຂອງເທວະດາໃຫ້ແມ່ພຣະມາຣີອາ, ແມ່ພຣະກໍມີຊີວິດເໝືອນກັບຍິງສາວທົ່ວໄປຄືມີແຜນການທີ່ຈະສ້າງຄອບຄົວ ແລະຜູ້ທີ່ເປັນຄູ່ໝັ້ນຂອງແມ່ພຣະກໍແມ່ນນັກບຸນຢໍແຊ. ແລະນັກບຸນຢໍແຊເອງກໍມີຊີວິດແລະອາຊີບເໝືອນກັບຊາຍໜຸ່ມທົ່ວໄປ. ພໍເມື່ອເທວະດາມາແຈ້ງຂ່າວໃຫ້ແມ່ພຣະມາຣີອາ, ແຜນການຊີວິດຂອງທ່ານທັງສອງກໍຜັນປ່ຽນໄປ. ຍ້ອນຫຍັງ? ຍ້ອນທ່ານທັງສອງໄດ້ຍອມສະຫລະແຜນການຊີວິດຂອງຕົນທີ່ໄດ້ຫວາດຝັນໄວ້ເພື່ອຮັບເອົາແຜນການຂອງພຣະເຈົ້າຜ່ານທາງຄຳບອກກ່າວຂອງເທວະດາ. ແນ່ນອນ, ການທຳຕາມນ້ຳພຣະໄທຂອງພຣະເຈົ້ານັ້ນບໍ່ແມ່ນສິ່ງທີ່ງ່າຍແລະປາດສະຈາກອຸປະສັກ. ແຕ່ທ່ານທັງສອງກໍໄດ້ເປັນຈິດໜຶ່ງໃຈດຽວກັນຜ່ານຜ່າຄວາມຫຍຸ້ງຍາກເພື່ອໃຫ້ພຣະບຸດຂອງພຣະເຈົ້າລົງມາບັງເກີດເປັນມະນຸດ. ນີ້ແລແມ່ນສິ່ງທີ່ທຳໃຫ້ຄອບຄົວຂອງພຣະເຢຊູເຈົ້າເປັນຄອບຄົວສັກສິດ. ຍ້ອນນັກບຸນຢໍແຊແລະແມ່ພຣະມາຣີອາໄດ້ຍອມສະຫລະນ້ຳໃຈຂອງຕົນ ເພື່ອທຳຕາມນ້ຳພຣະໄທຂອງພຣະເຈົ້າ.

ສ່ວນພຣະເຢຊູເຈົ້າເອງ, ເມື່ອເວລາເຕີບໃຫຍ່ຂຶ້ນ, ພຣະອົງກໍບໍ່ຢຸດຢ່ອນທີ່ຈະທຳຕາມນ້ຳພຣະໄທຂອງພຣະບິດາເຈົ້າສະຫວັນ. ສິ່ງນີ້ສະແດງອອກເມື່ອເວລາພຣະອົງສະເດັດໄປວິຫານຢູ່ນະຄອນເຢລູຊາແລມພ້ອມກັບບິດາມານດາຂອງພຣະອົງ. ເມື່ອບິດາມານດາຂອງພຣະອົງຫລົບເມືອ, ພຣະເຢຊູເຈົ້າຍັງສືບຕໍ່ຢູ່ໃນວິຫານທ່າມກາງພວກນັກປາດແລະອາຈານພຣະຄຳພີເພື່ອຟັງແລະສົນທະນາກັບພວກເຂົາ.
ເໝືອນກັບພຣະອົງກຳລັງປະກາດວາຈາຂອງພຣະເຈົ້າໃຫ້ພວກເຂົາຮູ້ຈັກ. ເມື່ອແມ່ພຣະມາຣີອາແລະນັກບຸນຢໍແຊພົບພໍ້ພຣະອົງ, ພຣະອົງຊົງຕອບພວກເຂົາວ່າ: ພໍ່ແມ່ບໍ່ຮູ້ຈັກບໍວ່າ ລູກຕ້ອງທຳວຽກການຂອງພຣະບິດາຂອງລູກ.

ສິ່ງນີ້ສະແດງໃຫ້ພວກເຮົາເຫັນວ່າ ການທີ່ຈະເປັນຄອບຄົວສັກສິດນັ້ນບໍ່ພຽງແຕ່ຜູ້ເປັນບິດາມານດາທີ່ທຳຕາມນ້ຳພຣະໄທຂອງພຣະເຈົ້າເທົ່ານັ້ນ ແຕ່ຜູ້ເປັນລູກກໍເຊັ່ນດຽວກັນ.

ດັ່ງນັ້ນ, ຄອບຄົວຂອງພວກເຮົາຈະກາຍເປັນຄອບຄົວສັກສິດໄດ້ກໍຕໍ່ເມື່ອສະມາຊິກທຸກຄົນໃນຄອບຄົວເປັນຈິດໜຶ່ງໃຈດຽວກັນເພື່ອທຳຕາມນ້ຳພຣະໄທຂອງພຣະເຈົ້າ. ເຮັດແນວໃດພວກເຮົາຈຶ່ງຈະສາມາດຮູ້ຈັກນ້ຳພຣະໄທຂອງພຣະເຈົ້າໄດ້? ພວກເຮົາສາມາດຮູ້ຈັກນ້ຳພຣະໄທຂອງພຣະເຈົ້າຜ່ານທາງຄຳພາວະນາ ແລະເປັນຕົ້ນຜ່ານທາງວາຈາຂອງພຣະອົງ.

ຂໍໃຫ້ວາຈາຂອງພຣະເຈົ້າໃນວັນນີ້ເປັນແສງສະວ່າງສ່ອງຈິດໃຈພວກເຮົາ ເພື່ອພວກເຮົາຈະໄດ້ຮູ້ຈັກສິ່ງໃດດີ, ສິ່ງໃດຖືກຕ້ອງ ເພື່ອໃຫ້ນ້ຳພຣະໄທຂອງພຣະເຈົ້າມາເຖິງພວກເຮົາແຕ່ລະຄົນ. ແລະເປັນຕົ້ນເພື່ອຄອບຄົວຂອງພວກເຮົາຈະໄດ້ເປັນເໝືອນຄອບຄົວຂອງພຣະເຢຊູເຈົ້າ ອັນແມ່ນຄອບຄົວສັກສິດນັ້ນເທີ້ນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ